ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 06 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20/04/16

# ມະຕິ

## ກອງປະຊຸມສະພາແຫ່ງຊາດ

## ວ່າດ້ວຍການຮັບຮອງເອົາ ການເລືອກຕັ້ງຫົວໜ້າອົງການໄອຍະການ ປະຊາຊົນສູງສຸດ ແລະ ປະທານສານປະຊາຊົນສູງສຸດ

---

- ອີງຕາມມາດຕາ 53 ຂໍ້ 9 ຂອງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015.
- ອີງຕາມມາດຕາ 57 ຂໍ້ 6 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ກ່ຽວກັບສິດ ແລະ ໜ້າທີ່ ຂອງກອງປະຊຸມຄົບປະຖົມມະລືກ ຂອງສະພາແຫ່ງຊາດ ໃນການເລືອກຕັ້ງເອົາ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ແລະ ປະທານສານປະຊາຊົນສູງສຸດ.

ຜ່ານການຄົ້ນຄວ້າປະກອບຄຳເຫັນ ຢ່າງເລິກເຊິ່ງກົງຖ້ວນ ຂອງບັນດາທ່ານສະມາຊິກສະພາແຫ່ງຊາດ ຢູ່ໃນວາລະຕອນເຊົ້າ ວັນທີ 20 ເມສາ 2016 ໃນກອງປະຊຸມຄັ້ງປະຖົມມະລືກ ຂອງສະພາແຫ່ງຊາດ ຊຸດທີ VIII.

## ກອງປະຊຸມ ຕົກລົງ:

ມາດຕາ 1 ເລືອກຕັ້ງ ທ່ານ ຄຳສານ ສຸວົງ ເປັນຫົວໜ້າອົງການໄອຍະການປະຊາຊົນສູງສຸດ.

ມາດຕາ 2 ເລືອກຕັ້ງ ທ່ານ ຄຳພັນ ສິດທິດຳພາ ເປັນປະທານສານປະຊາຊົນສູງສຸດ.

ມາດຕາ 3 ບັນດາອົງການຈັດຕັ້ງພັກ-ລັດ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ ແລະ ຜູ້ກ່ຽວ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 4 ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້